NSW GOVERNMENT | Education Public Schools

**Ride a bicycle safely**




## ຂໍ້ມູນເລື້ອງຄວາມປອດໄພຕາມ ທ້ອງຖນົນ

**ທ່ານມີໜ້າທີ່ຮັບຜິດຊອບໃນ ຄວາມປອດໄພຂອງລູກທ່ານໃນເວລາທີ່ພວກເຂົາເດີນທາງໄປໂຮງ ຮຽນທັງໄປແລະກັບ.**

# ການຂີ່ລົດຖີບແບບປອດໄພ

ຍ້ອນວ່າພວກເດັກນ້ອຍຍັງພວມພັທນາບັນດາທັກສະຕ່າງໆທີ່ຕ້ອງ ການ ໃນການຂີ່ລົດຜູ້ດຽວ, ສະຖານ ທີ່ທີ່ ປອດໄພທີ່ສຸດໃນການຂີ່ ລົດຖີບ, ສະກູດເຕີ ແລະ ສະເກັດບອຣ໌ດ ແມ່ນ ຢູ່ພາຍໃນ ເຂດທີ່ມີຮົ້ວອ້ອມກັ້ນ.

ຈົນກວ່າພວກເດັກນ້ອຍຈະມີອາຍຸ10ປີເປັນຢ່າງຕ່ຳພວກເຂົາຄວນ ຂີ່ໃຫ້ ຫ່າງໄກຈາກພາຫານະຕ່າງໆ ແລະ ທາງລົດເຂົ້າເຮືອນ. ໃນຂະນະທີ່ພວກເຂົາພວມຮຽນຂີ່ ນັ້ນ ມັນເປັນສິ່ງສຳຄັນທີ່ຈະຕ້ອງ ຂີ່ຫຼືຍ່າງຢູ່ ຂ້າງໆພວກເຂົາ ແລະ ເວົ້າລົມກ່ຽວກັບ ວ່າຈະເປັນຄົນຂີ່ ລົດຖີບທີ່ປອດໄພໄດ້ ຢ່າງໃດ.

ເດັກນ້ອຍທີ່ມີອາຍຸລະຫວ່າງ10ປີ ຫາ 12ປີຄວນຂີ່ລົດໃຫ້ຫ່າງໄກ ຈາກຖນົນທີ່ມີລົດຫຼາຍ.

ເດັກນ້ອຍທີ່ມີອາຍຸຕ່ຳກວ່າ16ປີ ແລະ ຜູ້ໃຫຍ່ທີ່ຂີ່ລົດຕິດຕາມໄປ ແລະຄວບຄຸມພວກ ເຂົາໄປນຳ ນັ້ນ ສາມາດຂີ່ຢູ່ຕາມ ທາງຍ່າງນອກ ຈາກ ວ່າຈະມີປ້າຍບອກຫ້າມ ຂີ່ລົດຖີບ.

**ສອນລູກໆຂອງທ່ານໃຫ້ເປັນຄົນຂີ່ລົດຖີບທີ່ມີຄວາມປອດໄພດ້ວຍການໃຫ້ ພວກເຂົາ:**

- ປະຕິບັດຕາມກົດຖນົນສຳລັບລົດຖີບ ກວມເຖິງ:
  - ຂີ່ຢູ່ຂ້າງຊ້າຍຂອງທາງຍ່າງ
  - ໃຫ້ທາງແກ່ຄົນຍ່າງທາງຂວາຂອງ ທາງຍ່າງ
  - ລະວັງເບິ່ງລົດທີ່ເຂົ້າແລະອອກ ທາງ ລົດເຂົ້າເຮືອນ
- ໃສ່ໝວກກັນນ໊ອກສຳລັບລົດຖີບ ຊຶ່ງຕ້ອງໃສ່ໃຫ້ຖືກແບບ – ມັນເປັນກົດໝາຍ
- ໃສ່ເຄື່ອງທີ່ມີສີແຈ້ງເຊັ່ນເສື້ອແວັສ ເພື່ອວ່າຜູ້ທີ່ໃຊ້ຖນົນຄົນອື່ນສາ ມາດ ແນມເຫັນພວກເຂົາ.

**ເພື່ອເອົາການອູ້ມຊູເພີ້ມຕື່ມ**

ເຂົ້າໄປເບິ່ງໂຄງການ ການສຶກສາ ເລື້ອງຄວາມປອດໄພຕາມທ້ອງ ຖນົນ ຂອງທາງກະຊວງ ທີ່:

https://education.nsw.gov.au/road-safety-education ຫຼືເປີດເຂົ້າເບິ່ງ

https://education.nsw.gov.au ແລະຊອກຫາເອົາ ການສຶກສາ ເລື້ອງ ຄວາມປອດໄພຕາມ ທ້ອງຖນົນ.

**ສຳລັບເດັກທີ່ໃຫຍ່ແລ້ວ, ຄິດໃຫ້ດີ ກ່ຽວ ກັບສິ່ງທີ່ຢູ່ຕໍ່ລົງໄປນີ້ໃນເວລາ ທີ່ຕັດ ສິນເບິ່ງຄວາມສາມາດຂອງ ພວກເຂົາ ໃນການຂີ່ດ້ວຍຕົນເອງ:**

- ຫົນທາງທີ່ຈະທ່ຽວນັ້ນປອດໄພເທົ່າ ໃດ?
- ທັກສະໃນການຂີ່ລົດຂອງພວກເຂົາ ເປັນຢ່າງໃດ?
- ພວກເຂົາຮູ້ໃນສິ່ງທີ່ຢູ່ອ້ອມຂ້າງ ພວກ ເຂົາດີເທົ່າໃດໃນສະພາບ ແວດລ້ອມ ຂອງການຈາຣະຈອນ?
- ພວກເຂົາຈະສາມາດຈັດການກັບ ສິ່ງທີ່ເຮັດໃຫ້ມີອັນຕະລາຍໄດ້ດີ ເທົ່າໃດ?

ໂຮງຮຽນຂອງທ່ານຈະມີກົດລະບຽບ ກ່ຽວກັບເລື້ອງນັກຮຽນເອົາລົດ ຖີບເຂົ້າມາເດີ່ນໂຮງຮຽນ. ໃຫ້ແນ່ໃຈວ່າລູກໆຂອງທ່ານໄດ້ປະຕິ ບັດຕາມສິ່ງເຫຼົ່ານີ້ທຸກໆເວລາ.

